ADB
ASIAN DEVELOPMENT BANK
6 ADB Avenue, Mandaluyong City
1550 Metro Manila, Philippines
Tel +63 2 632 4444
Fax +63 2 636 2444

www.adb.org

NEWS RELEASE

# ເອດີບີ ຈະຊ່ວຍ ສປປ ລາວ ຍົກລະດັບຄຸນນະພາບວຽກງານ ອາຊີວະສຶກສາຊັ້ນສູງ ແລະ ວຽກງານອາຊີວະສຶກສາແລະອົບຮົມວິຊາຊີບ

**ວຽງຈັນ, ສປປ ລາວ (8 ພະຈິກ 2016)** – ມື້ນີ້ ທະນາຄານພັດທະນາອາຊີ (ເອດີບີ) ແລະລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ໄດ້ຮ່ວມລົງນາມໃນສັນຍາທຶນກູ້ຢືມແລະທຶນຊ່ວຍເຫລືອລ້າມູນຄ່າ 64,9 ລ້ານໂດລາສະຫະລັດ ທຶນດັ່ງການຈະໄດ້ນໍາໃຊ້ເພື່ອປັບປຸງຄຸນນະພາບຂອງວຽກງານອາຊີວະສຶກສາ ແລະ ເພື່ອຮັບປະກັນໃຫ້ນັກສຶກສາທີ່ຈົບໃໝ່ໄດ້ມີວິຊາຊີບທີ່ຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫລາດແຮງງານ.

ສັນຍາທຶນກູ້ຢືມແລະທຶນຊ່ວຍເຫລືອລ້າດັ່ງກ່າວໄດ້ຮັບການລົງນາມຕາງໜ້າໃຫ້ແກ່ລັດຖະບານແຫ່ງສປປ ລາວ ໂດຍທ່ານ ນາງ ທິບພະກອນ ຈັນທະວົງສາ, ຮອງລັດຖະມົນຕີກະຊວງການເງິນ, ແລະ ທ່ານ ສະຕິເວັນ ສະຈິປານີ, ຮັກສາການຜູ້ຕາງໜ້າເອດີບີປະຈຳສຳນັກງານໃນ ສປປ ລາວ. ທ່ານ ກອງສີ ແສງມະນີ, ຮອງລັດຖະມົນຕີກະຊວງສຶກສາແລະກິລາພ້ອມທັງບັນດາແຂກຜູ້ຕາງໜ້າໃຫ້ແຕ່ລະສຳນັກງານອົງການລັດຖະບານທີ່ກ່ຽວຂ້ອງກໍ່ໄດ້ເຂົ້າຮ່ວມໃນພິທີເຊັນສັນຍາທຶນກູ້ຢືມແລະທຶນຊ່ວຍເຫລືອລ້າດັ່ງກ່າວ.

ທ່ານ ສະຈິປານີ ໄດ້ກ່າວວ່າ "ໂຄງການທຶນກູ້ຢືມແລະທຶນຊ່ວຍເຫລືອລ້າດັ່ງກ່າວແມ່ນເປັນສ່ວນປະກອບທີ່ສຳຄັນຕໍ່ກັບແຜນງານເປີດກ້ວາງວຽກການການປະຕິຮູບການສຶກສາຂອງກະຊວງສຶກສາແລະກິລາເພື່ອຍົກລະດັບຄຸນນະພາບແລະຄວາມສອດຄ່ອງຂອງວຽກງານອາຊີວະສຶກສາຊັ້ນສູງ ແລະ ພ້ອມທັງການອົບຮົມວິຊາຊີບ," ທ່ານຍັງກ່າວຕື່ມອີກວ່າ "ໂຄງການດັ່ງກ່າວຈະຊ່ວຍຮັບປະກັນໃຫ້ນັກສຶກສາທີ່ຈົບໃໝ່ໄດ້ມີວິຊາຊີບທີ່ຈຳເປັນ ເພື່ອປະກອບສ່ວນເຂົ້າເປັນກຳລັງແຮງງານທີ່ມີຄວາມຕ້ອງການນັບມື້ນັບເພີ່ມຂຶ້ນສູງ, ພ້ອມທັງສຸມໃສ່ການເປີດກ້ວາງໃຫ້ແກ່ນັກສຶກສາຜູ້ທີ່ທຸກຍາກແລະຜູ້ດ້ອຍໂອກາດໄດ້ເຂົ້າເຖິງການສຶກສາແລະການອົບຮົມວິຊາຊີບຕ່າງໆ".

ໂຄງການດັ່ງກ່າວຈະສຸມໃສ່ເພື່ອປັບປຸງລະບົບວຽກງານອະຊີວະສຶກສາຊັ້ນສູງແລະແຜນງານວຽກງານອະຊີວະສຶກສາແລະອົບຮົມວິຊາຊີບຕ່າງໆເພື່ອສ້າງໃຫ້ບັນດານັກສຶກສາຈົບໃໝ່ໄດ້ມີວິຊາຊີບທີ່ກຽມພ້ອມຮັບໃຊ້ໃນໜ້າວຽກ. ໂຄງການທຶນກູ້ຢືມແລະທຶນຊ່ວຍເຫລືອລ້າມູນຄ່າ 39,9 ລ້ານໂດລາສະຫະລັດຈະໄດ້ສະໜອງເຂົ້າໃສ່ກິດຈະກຳສຳລັບ ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານອະຊີວະສຶກສາຊັ້ນສູງໄລຍະສອງ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຂອດເຊື່ອມຕໍ່ ລະຫວ່າງ ການໃຫ້ບໍລິການດ້ານວຽກງານອາຊີວະສຶກສາຊັ້ນສູງ ແລະ ສະໜອງຄວາມຕ້ອງການດ້ານສີມືແຮງງານໃນການພັດທະນາເສດຖະກິດສັງຄົມ ໂດຍການຍົກລະດັບຄຸນນະພາບຂອງການສຶກ, ເພີ່ມທະວີຄວາມເຂັ້ມແຂງໃຫ້ແກ່ການເຂົ້າເຖິງແຜນງານວຽກງານອາຊີວະສຶກສາຊັ້ນສູງ, ແລະເສີມສ້າງການບໍລິຫານແລະຄຸ້ມຄອງສະຖາບັນອາຊີວະສຶກສາຊັ້ນສູງ. ໂຄງການດັ່ງກ່າວຍັງຈະສະໜັບສະໜູນຄວາມພະຍາຍາມຂອງລັດຖະບານເພື່ອຕອບສະໜອງໄດ້ຕາມຄວາມຕ້ອງການແຮງງານທີ່ມີສີມື ໂດຍສະເພາະແມ່ນການສະໜອງແຮງງານທີ່ມີສີມື

ໃຫ້ແກ່ຂະແໜງການຕັດຫຍິບ ແລະ ຂະແໜງການບໍລິການຕ່າງໆທີ່ມີຄວາມຕ້ອງການນັບມືນັບເພີ່ມຂຶ້ນ ອັນເນື່ອງມາຈາກທິດທາງການພັດທະນາປະເທດໄດ້ຍ້າຍຈາກການພັດທະນາເສດຖະກິດທີ່ອີງໃສ່ການກະສິກຳ.

ໂຄງການທຶນຊ່ວຍເຫລືອລ້າມູນຄ່າ 25 ລ້ານໂດລາສະຫະລັດ ສຳລັບໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານອະຊີວະສຶກສາແລະອົບຮົມວິຊາຊີບໄລຍະສອງ ຈະຊ່ວຍປັບເຮັດໃຫ້ ແຜນງານວຽກງານອະຊີວະສຶກສາຊັ້ນສູງແລະການອົບຮົມວິຊາຊີບກັບຄວາມຕ້ອງການຂອງຕະຫລາດແຮງງານໃນປະຈຸບັນໃຫ້ມີຄວາມສອດຄ່ອງກັນ. ໂຄງການດັ່ງກ່າວຈະສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ແຜນວຽກງານອາຊີວະສຶກສາແລະອົບຮົມວິຊາຊີບໂດຍການຍົກລະດັບສະພາບແວດລ້ອມຂອງການຮຽນການສອນໃນວິທະຍາໄລອະຊີວະສຶກສາ 8 ແຫ່ງ ແລະ ສ້າງໃຫ້ອາຈານສອນມີຄວາມສາມາດທີ່ເຂັ້ມແຂງ ເພື່ອໃຫ້ການອົບຮົມວິຊາຊີບໄດ້ຢ່າງມີປະສິດທິພາບສູງ. ໂຄງການຍັງຈະໄດ້ຍົກລະດັບວຽກງານການຄູ້ມຄອງບໍລິຫານແລະການມີສ່ວນຮ່ວມຂອງຫົວໜ່ວຍທຸລະກິດເອກະຊົນ ເພື່ອຮັບປະກັນໃຫ້ໄດ້ວ່າ ການອົບຮົມວິຊາຊີບແມ່ນຕອບສະໜອງຕາມຄວາມຕ້ອງການຂອງອຸດສະຫະກຳພາຍໃນປະເທດ. ນັກຮຽນຜູ້ທຸກຍາກແລະດ້ອຍໂອກາດຈະໄດ້ຮັບເບ້ຍລ້ຽງແລະທີ່ພັກໃນຫໍພັກຂອງວິທະຍາໄລ.

ເອດີບີ ມີສຳນັກງານໃຫຍ່ຕັ້ງຢູ່ນະຄອນຫລວງມະນີລາ ຊຶ່ງມີໜ້າທີ່ຊ່ວຍຫລຸດຜ່ອນຄວາມທຸກຍາກໃນພາກພື້ນອາຊີແລະປາຊີຟິກ ໂດຍຜ່ານການຈະເລີນເຕີບໂຕທາງດ້ານເສດຖະກິດທີ່ສະເໝີພາບ, ການຈະເລີນເຕີບໂຕທີ່ເຮັດໃຫ້ສິ່ງແວດລ້ອມມີຄວາມສາມາດຄວາມຍືນຍົງ ແລະ ການເຊື່ອມໂຍງກັນໃນພາກພື້ນ. ເອດີບີ ສ້າງຕັ້ງຂຶ້ນໃນປີ 1966, ໃນປີ 2016 ເອດີບີຈະໄດ້ສະເຫລີມສະຫຼອງຄົບຮອບ 50 ປີໃນການເປັນຄູ່ຮ່ວມພັດທະນາໃນພາກພື້ນ. ເອດີບີ ມີສະມາຊິກທັງໝົດ 67 ປະເທດ ໃນນັ້ນ 48 ປະເທດມາຈາກພາກພື້ນດັ່ງກ່າວ. ໃນປີ 2015, ການຊ່ວຍເຫລືອຂອງເອດີບີມີມູນຄ່າລວມທັງໝົດ 27,2 ຕື້ໂດລາສະຫະລັດ ໃນນັ້ນລວມທັງທຶນສົມທົບມູນຄ່າ 10,7 ຕື້ໂດລາສະຫະລັດ.

ຂໍ້ມູນເພີ່ມເຕີມພົວພັນ:
ສຸພາວັນ ພົນມະນີ
ໂທ: (856 21) 250444
ມືຖື: (856 20) 55617237
E-mail: sphonmany@adb.org

Connect with us on Twitter @ADB_HQ